# ຊີວິດນີ້ບໍ່ອາດລືມຂອງນ້ອຍ



| | | |
|---|---|---|
| ອອກແບບ ແລະ ແຕ້ມຮູບປະກອບ | : | ຈົງຄຳ ພອນແກ້ວ |
| Design and illustration | : | Mr.Chongkham PHONEKEO |
| ຜູ້ຊ່ວຍແຕ້ມຮູບປະກອບ | : | ຄຳຮຸ່ງ ປະສົມສຸກ |
| Assistant Illustrator | : | Mr. Khamhoung PASOMSOUK |
| ຈັດໜ້າໂດຍ | : | ພິພັດ ພະເມືອງ ແລະ ດ.ຂ ສິນ |
| Layout | : | Mr Phiphat PHAMOUANG and D.K Art |
| ຈັດພິມໂດຍ | : | ອົງການບ້ານຈຸດສຸມສາກົນ |
| Created & Published | : | Village Focus International (VFI) |
| ຂະໜາດ | : | 18 ຊມ x 25 ຊມ |
| Size | : | 18 cm x 25 cm |
| ພິມທີ່ | : | ໂຮງພິມ ພະໄຊ ກຣາບຟິກ |
| Printed | : | Phaxay Graphic |
| ພິມຄັ້ງທີ 1 | : | 2,000 ຫົວ |
| First Edition | : | 2,000 copies |
| ທະບຽນການພິມເລກທີ | : | 351/ພຈ 28102011 |
| Approved reference number | | |

**ຄຳນຳ**

ການຄ້າມະນຸດເປັນບັນຫາໜຶ່ງທີ່ເກີດຂຶ້ນໃນທົ່ວໂລກ ແລະ ຢູ່ພາຍໃນປະເທດລາວເຮົາກໍເປັນປະເທດໜຶ່ງທີ່ກຳລັງປະສົບກັບບັນຫາດັ່ງກ່າວ ແລະ ເປັນປະກົດການຫຍໍ້ທໍ້ໃນສັງຄົມ, ອັນສືບເນື່ອງມາຈາກຄວາມທຸກຍາກ, ດ້ອຍໂອກາດທາງການສຶກສາ, ບໍ່ມີວຽກເຮັດງານທຳ, ບັນຫາຄອບຄົວ, ການເຂົ້າເຖິງຂໍ້ມູນຂ່າວສານທີ່ຖືກຕ້ອງ, ສະພາບແວດລ້ອມ ແລະ ສິ່ງຈູງໃຈຕ່າງໆ, ລວມເຖິງການປະຕິບັດກົດໝາຍ ແລະ ລະບຽບການຕ່າງໆທີ່ຍັງບໍ່ທັນມີຄວາມເຂັ້ມງວດ. ເພື່ອເປັນການສະກັດກັ້ນບັນຫາດັ່ງກ່າວ, ອົງການ ບ້ານຈຸດສຸມສາກົນ, ໂຄງການປົກປ້ອງ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກນ້ອຍ, ຈຶ່ງໄດ້ສ້າງປຶ້ມກະຕູນເລື່ອງ ***ຊີວິດນີ້ບໍ່ອາດລືມຂອງນ້ອຍ*** ທີ່ມີເນື້ອໃນກ່ຽວກັບຜົນຮ້າຍ ແລະ ຄວາມອັນຕະລາຍຂອງການຄ້າມະນຸດ, ສິດທິຂອງຜູ້ຖືກເຄາະຮ້າຍລວມເຖິງບາງກົດໝາຍທີ່ກ່ຽວກັບການດຳເນີນຄະດີ ແລະ ການລົງໂທດຜູ້ກະທຳຜິດຂຶ້ນມາ ເພື່ອແນໃສ່ການເຜີຍແຜ່ຂໍ້ມູນຂ່າວສານໃຫ້ທົ່ວເຖິງ ໂດຍສະເພາະ ແມ່ນປະຊາຊົນ ແລະ ຊາວໜຸ່ມໃນເຂດຫ່າງໄກສອກຫຼີກ ທີ່ມີຂໍ້ຈຳກັດໃນການອ່ານໜັງສືກໍຈະສາມາດເບິ່ງຮູບ ແລະ ເຂົ້າໃຈໄດ້ດີຕື່ມອີກ.

ຫວັງວ່າປຶ້ມຫົວນີ້ຈະຊ່ວຍໃຫ້ປະຊາຊົນຢູ່ທ້ອງຖິ່ນ ໂດຍສະເພາະແມ່ນບັນດາໄວໜຸ່ມ ແລະ ເດັກນ້ອຍ ນອກຈາກໄດ້ຮັບຄວາມເພີດເພີນຈາກຮູບກາຕູນແລ້ວ ຍັງສາມາດເຂົ້າໃຈແຈ້ງເຖິງອັນຕະລາຍຂອງການຄ້າມະນຸດ ຮັບຮູ້ສິດທິຂອງຜູ້ຖືກເຄາະຮ້າຍ ແລະ ມາດຕະການລົງໂທດຕໍ່ກັບຜູ້ທີ່ກະທຳຜິດຕາມກົດໝາຍຂອງ ສປປ ລາວ.

ອົງການ ບ້ານຈຸດສຸມສາກົນ ຂໍສະແດງຄວາມຂອບໃຈມາຍັງທຸກໆພາກສ່ວນທີ່ກ່ຽວຂ້ອງຢ່າງສູງ ທີ່ໄດ້ໃຫ້ການສະໜັບສະໜູນ ໃນການສ້າງປຶ້ມກະຕູນເຫຼັ້ມນີ້.

ທີມງານໂຄງການປົກປ້ອງ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ແມ່ຍິງ ແລະ ເດັກນ້ອຍ.

ອົງການ ບ້ານຈຸດສຸມສາກົນ

# ຊີວິດນີ້ບ່ອາດລືມຂອງນ້ອຍ


ຄອບຄົວຂອງລຸງ ພັນ ກັບປ້າ ມາລີ ເປັນຄອບຄົວທີ່ທຸກຍາກຂາດເຂີນ,
ການດຳລົງຊີວິດແມ່ນມີຄວາມລຳບາກຫຼາຍ
ເນື່ອງຈາກ ຄອບຄົວຂອງລຸງ ພັນ ແລະ ປ້າ ມາລີ
ມີລູກຫຼາຍຄົນທີ່ຈະຕ້ອງລ້ຽງດູເບິ່ງແຍງ
ແຕ່ກໍຍັງໄຄແດ່ໜ້ອຍໜຶ່ງ ທີ່ມີລູກສາວ
ກົກຊື່ ນ້ອຍ ເປັນລູກທີ່ຟັງຄວາມພໍ່ແມ່
ເຊິ່ງປີນີ້ ນ້ອຍເອງ ອາຍຸກໍພໍດີໄດ້ 17 ປີ
ແຕ່ລະປີເມື່ອຮອດຍາມພັກໂຮງຮຽນ ນ້ອຍ ກໍໄດ້ໄປຫາຮັບຈ້າງເສຍຫຍ້າໄຮ່, ເກັບກາເຟຢູ່ແຖວບ້ານ
ແລະ ບ້ານໃກ້ຄຽງ ເພື່ອຫາເງິນມາຊ່ວຍຄອບຄົວ


ມາຮອດປີນີ້, ຜົນລະປູກຂອງຄອບຄົວໄດ້ຮັບໝາກຜົນ ໜ້ອຍກວ່າທຸກປີທີ່ຜ່ານມາ
ການລົງທຶນຊື້ແນວພັນເຄື່ອງປູກຂອງຝັ່ງນັ້ນ ແມ່ນໄດ້ກູ້ຢືມເງິນນຳເຂົາເຈົ້າໄປຊື້ກ່ອນ
ແຕ່ປີນີ້ ອາກາດແຫ້ງແລ້ງຫຼາຍ ເຮັດໃຫ້ຜົນລະປູກແຫ້ງຕາຍຫຼາຍ ດັ່ງນັ້ນ, ຈຶ່ງບໍ່ມີຜົນລະປູກຂາຍ ເພື່ອເອົາເງິນມາແທນໜີ້ສິນທີ່ກູ້ຢືມມາ.
ເຖິງ ນ້ອຍ ຈະຊ່ວຍເຮັດວຽກ ແລະ ຊ່ວຍຫາ ເງິນມາລ້ຽງຄອບຄົວຫຼາຍປານໃດ
ແຕ່ຄອບຄົວກໍຍັງບໍ່ກຸ້ມຢູ່ກຸ້ມກິນ

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ